ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ປະກາດສ້າງຕັ້ງໜ່ວຍພັກ ບໍລິສັດຂໍ້ມູນຂ່າວສານສິນເຊື່ອ




ໃນວັນທີ 12 ພະຈິກ 2020 ທີ່ຜ່ານມາ, ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ປະກາດການສ້າງຕັ້ງໜ່ວຍພັກບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໂດຍການໃຫ້ກຽດເຂົ້າຮ່ວມຂອງສະຫາຍ ສອນໄຊ ສິດພະໄຊ ກຳມະການສຳຮອງສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ; ພ້ອມນີ້, ກໍ່ມີຜູ້ຕາງໜ້າຈາກບັນດາໜ່ວຍພັກກົມພາຍໃນ ທຫລ ເຂົ້າຮ່ວມ.

ສະຫາຍ ນາງວັນຄຳ ລຸນທອນ ເລຂາໜ່ວຍພັກ, ຜູ້ອຳນວຍການບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໄດ້ລາຍງານການຈັດຕັ້ງເຄື່ອນໄຫວວຽກງານຜ່ານມາໄດ້ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ ສຳເລັດການຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳພາຍໃນຂອງບໍລິສັດ ຈຳນວນ 4 ສະບັບ, ສຳເລັດການຄົ້ນຄວ້າອອກແຈ້ງການກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ 3 ສະບັບ; ສຳເລັດການຄົ້ນຄວ້າແຜນດຳເນີນທຸລະກິດ, ແຜນງົບປະມານປະຈຳປີ 2020 ແລະ ກຳນົດແຜນງານ-ໂຄງການ (2021-2025) ຂອງບໍລິສັດ; ສຳເລັດການຄົ້ນຄວ້າການກຳນົດຜັງບັນຊີ ແລະ ສະຫຼຸບການເຄື່ອນໄຫວບັນຊີ; ສຳເລັດບົດຄົ້ນຄ້ວາເບື້ອງຕົ້ນການໃຫ້ຄະແນນສິນເຊື່ອຂອງບຸກຄົນ ແລະ ການຈັດປະເພດຄວາມໜ້າເຊື່ອຖືຂອງວິສະຫະກິດ; ສຳເລັດການເຊື່ອມຕໍ່ລະບົບເຄືອຂ່າຍ ແລະ ສາຍສົ່ງຫາ ທຫລ ແລະ ໃຫ້ບໍລິການສະໜອງຂໍ້ມູນຂ່າວສານສິນເຊື່ອແບບທັນທີ (Online) ໃຫ້ແກ່ສະມາຊິກຢ່າງເປັນປົກກະຕິ; ນອກຈາກນີ້ຍັງໄດ້ສະໜອງຂໍ້ມູນໃຫ້ແກ່ການນຳ, ບັນດາກົມ ຫຼື ທຽບເທົ່າຂອງ ທຫລ ລວມເຖິງລູກຄ້າພາຍນອກ. ສຳເລັດການກວດກາ ແລະ ແກ້ໄຂຂໍ້ມູນຂອງສະມາຊິກ ທີ່ບໍ່ໄດ້ຄຸນນະພາບ, ບໍ່ສົ່ງຂໍ້ມູນ, ສົ່ງຂໍ້ມູນຊ້າ ຢູ່ນະຄອນຫຼວງວຽງຈັນ ແລະ ບັນດາແຂວງພາກໃຕ້ 29 ແຫ່ງ, ສຳເລັດປະສານງານ ແລະ ສ້າງຄວາມເຂົ້າໃຈໃຫ້ແກ່ 8 ກະຊວງທີ່ກ່ຽວຂ້ອງ ແລະ 5 ບໍລິສັດສາທາລະນຸປະໂພກ ເພື່ອເກັບກຳຂໍ້ມູນມາສົມທຽບ ແລະ ສ້າງຜະລິດຕະພັນ; ພ້ອມທັງຊຸກຍູ້, ກວດກາ, ແນະນຳ, ຝຶກອົບຮົມວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ແກ່ສະຖາບັນການເງິນ ທີ່ເປັນສະມາຊິກໃໝ່.



ຜ່ານການຈັດຕັ້ງປະຕິບັດວຽກງານເມື່ອທຽບໃສ່ທ້າຍປີ 2019 ມີສະມາຊິກເພີ່ມຂຶ້ນ 26 ແຫ່ງ, ການບໍລິການສະໜອງຂໍ້ມູນຂ່າວສານສິນເຊື່ອແບບທັນທີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 15,89%, ສາມາດເຊື່ອມຕໍ່ຂໍ້ມູນທະບຽນວິສາຫະກິດນຳກະຊວງກ່ຽວຂ້ອງ ແລະ ເກັບກຳຂໍ້ມູນການຊຳລະຄ່າໄຟຟ້າໃນຂອບເຂດທົ່ວປະເທດ ແລະ ຄ່ານ້ຳປະປາ ໃນນະຄອນຫຼວງ. ຮອດປະຈຸບັນ ສະມາຊິກຂໍ້ມູນຂ່າວສານສິນເຊື່ອ ມີຈຳນວນທັງໝົດ 142 ແຫ່ງ ໃນນີ້ ທະນາຄານ 43 ແຫ່ງ ແລະ ສະຖາບັນການເງິນ 99 ແຫ່ງ ແລະ 1 ອົງກອນ ເຊິ່ງໄດ້ເຮັດໃຫ້ຜົນການເຄື່ອນໄຫວທຸລະກິດຂອງບໍລິສັດໃນ 9 ເດືອນຜ່ານມາມີກຳໄລກ່ອນອາກອນຈຳນວນໜຶ່ງ.

 

ໃນທີ່ປະຊຸມໄດ້ມີການປະກາດຂໍ້ຕົກລົງແຕ່ງຕັ້ງບົ່ງຕົວສະຫາຍ ນາງ ວິນຄຳ ລຸນທອນ ເປັນເລຂາໜ່ວຍພັກບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ແລະ ສະຫາຍ ສີດາ ທັມມະວົງ ເປັນຮອງເລຂາ.

ສະຫາຍ ເລຂາຄະນະພັກ ທຫລ ໄດ້ຕີລາຄາສູງຕໍ່ຜົນສຳເລັດເບື້ອງຕົ້ນໃນການເຄື່ອນໄຫວຊີ້ນຳໆພາວຽກງານຂອງບໍລິສັດຊຶ່ງບັນດາສະຫາຍສະມາຊິກພັກ ແລະ ພະນັກງານໄດ້ເປັນເຈົ້າການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫ່ຍຄັ້ງທີ III ຂອງອົງຄະນະພັກ ທຫລ ດ້ວຍຄວາມຮັບຜິດຊອບສູງ ແລະ ຮັບຜົນສຳເລັດດ້ວຍດີເປັນຕົ້ນໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ ແລະ ນຳພາແນວຄິດໃຫ້ຖັນແຖວສະມາຊິກພັກດ້ວຍຫຼາຍຮູບການ ພະນັກງານ- ເຮັດໃຫ້ສະພາບແນວຄິດຂອງແຕ່ລະເປົ້າໝາຍໂດຍລວມມີຄວາມສະຫງົບ ເປັນເອກະພາບສູງຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ແລະ ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ, ມີສະຕິຕໍ່ການຈັດຕັ້ງ , ເຄົາລົບນັບຖືລະບຽບກົດໝາຍ ໂດຍສະເພາະມີຄວາມຄວາມຫ້າວຫັນບຸກ

ບີນ, ຍົກສູງຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ລວມທັງມີແບບແຜນດຳລົງຊີວິດທີ່ສອດຄ່ອງກັບລະບຽບກົດໝາຍເປັນຢ່າງດີ.

ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອ ແຫ່ງ ສປປ ລາວ ຮັບການສ້າງຕັ້ງຂຶ້ນ ຕາມຂໍ້ຕົກລົງສະບັບເລກທີ 919/ທຫລ ລົງວັນທີ 04 ຕຸລາ 2019, ໃບທະບຽນວິສາຫະກິດສະບັບ ເລກທີ 2194/ຈທວ, ລົງວັນທີ 27 ພະຈິກ 2019 ແລະ ໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 99/ທຫລ ລົງວັນທີ 17 ທັນວາ 2019 ເຊິ່ງມີສຳນັກງານຕັ້ງຢູ່ຕຶກຕະຫຼາດຫຼັກຊັບລາວ ປະກອບມີພະນັກງານທັງໝົດ 18 ຄົນ; ຄະນະອຳນວຍການ 3 ຄົນ, ຄະນະພະແນກ 5 ຄົນ ແລະ ພະນັກງານວິຊາການ 10 ຄົນ ໃນນີ້ມີສະມາຊິກພັກ 9 ສະຫາຍ, ຍິງ 4 ສະຫາຍ ແລະ ສຳຮອງ 1 ສະຫາຍ.




# ຂ່າວ-ພາບ: ສົມອົກ ເຄນຄຳແພງ

ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ